**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດທີ 18 ຕຸລາ 2020 (10-18-2020)**

# ຄໍາໝັ້ນສັນຍາຂອງພຣະຄຣິດທີ່ມີຕໍ່ພວກເຮົາ

**ແມ່ນຫຍັງເປັນບົດຮຽນກ່ຽວກັບຄໍາໝັ້ນສັນຍາທີ່ທ່ານໄດ້ຖືກສອນເມື່ອເຕີບໃຫຍ່ຂຶ້ນ?**

**ຈຸດສໍາຄັນໃນບົດຮຽນ:** ແມ້ແຕ່ໃນຊ່ວງເວລາທີ່ພວກເຮົາຊົ່ວຊ້າທີ່ສຸດ, ພຣະຄຣິດຊົງສັນຍາຢ່າງເຕັມປ່ຽມທີ່ຈະຮັກພວກເຮົາແລະນໍາພວກເຮົາມາຫາພຣະເຈົ້າ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

"ຄໍາໝັ້ນສັນຍາ". ຄໍາເວົ້າຄໍານີ້ເຮັດໃຫ້ທ່ານຕົກໃຈຫຼືບໍ່? ວັທນະທັມຂອງພວກເຮົານັບມື້ນັບຫຼົງໄຫຼກັບແນວຄວາມຄິດຂອງຄໍາໝັ້ນສັນຍາ. ຈຸດສໍາຄັນແມ່ນພວກເຮົາບໍ່ມັກຄໍາໝັ້ນສັນຍາ. ຍົກຕົວຢ່າງ: ພວກເຮົາກຽມພ້ອມທີ່ຈະກະໂດດເອົາລາຄາພິເສດທີ່ບໍລິສັດເຄໂບ (ທີວີ) ໄດ້ປະກາດໂຄສານາ. ແຕ່ວ່າຫຼັງຈາກນັ້ນພວກເຮົາກໍ່ຈົ່ມຕໍ່ວ່າຕໍ່ຂານເມື່ອພວກເຮົາຄົ້ນພົບວ່າຄ່າບໍຣິການປະຈໍາເດືອນດັ່ງກ່າວແມ່ນມາພ້ອມກັບຄໍາເຊັນສັນຍາເປັນເວລາ 1 ປີ. ຮ້າຍໄປກວ່ານັ້ນ, ການແຕ່ງງານຕາມປະເພນີໄດ້ກ້າວເຂົ້າສູ່ສະພາບທີ່ຫຼຸດໜ້ອຍຖອຍລົງເປັນເວລາຫຼາຍທົດສະວັດ (10 ປີ), ແຕ່ດຽວນີ້ເກືອບຈະຫຼົ້ມເຫຼວແລ້ວ. ໃນບັນດາຜູ້ໃຫຍ່ວັຍໜຸ່ມ, ຄາດວ່າ 25% ຂອງພວກເຂົາຈະບໍ່ແຕ່ງງານເລີຍ. ເຫດຜົນນຶ່ງແມ່ນເນື່ອງຈາກການຜູກມັດ. ບັນດາຄົນເຫຼົ່ານີ້ມັກຈະບໍ່ເຮັດຄໍາໝັ້ນສັນຍາຕລອດຊີວິດທີ່ພວກເຂົາບໍ່ແນ່ໃຈວ່າພວກເຂົາຈະສາມາດຮັກສາຄໍາໝັ້ນສັນຍານັ້ນໄດ້ແທ້.

ຄໍາໝັ້ນສັນຍາຈະດີທີ່ສຸດໃນເມື່ອພວກເຮົາຮູ້ວ່າຄົນອື່ນຍຶດໝັ້ນກັບພວກເຮົາແລະມີສິ່ງທີ່ດີທີ່ສຸດຂອງພວກເຮົາຢູ່ໃນໃຈຂອງພວກເຂົາ. ນັ້ນແມ່ນສິ່ງທີ່ເຮັດໃຫ້ຄວາມສໍາພັນຂອງພວກເຮົາກັບພຣະເຈົ້າພິເສດຫຼາຍ; ພຣະອົງໄດ້ຊົງສັນຍາກັບພວກເຮົາກ່ອນທີ່ພວກເຮົາຈະໄດ້ສັນຍາກັບພຣະອົງ! ແລະຍິ່ງໄປກວ່ານັ້ນ, ແມ່ນແຕ່ເມື່ອຄໍາໝັ້ນສັນຍາຂອງພວກເຮົາຕໍ່ພຣະອົງຫວັ່ນໄຫວໄປກໍ່ຕາມ, ພຣະອົງບໍ່ຊົງຢຸດຢັ້ງຕໍ່ຄໍາໝັ້ນສັນຍາຂອງພຣະອົງທີ່ມີຕໍ່ພວກເຮົາ. *ຂໍ້ພິສູດທີ່ຍິ່ງໃຫຍ່ທີ່ສຸດຂອງຄໍາໝັ້ນສັນຍານີ້ ແມ່ນຢູ່ໃນຄວາມລອດພົ້ນຂອງພວກເຮົາ.*

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

## ການສຶກສາພຣະຄັມພີ

## 1. <u>ໂຣມ 5:6-8</u>

*6 ຂນະທີ່ເຮົາທັງຫຼາຍຍັງຂາດກໍາລັງພຣະຄຣິດໄດ້ຊົງສິ້ນພຣະຊົນເພື່ອແທນຄົນຊົ່ວອະທັມຕາມເວລາອັນເໝາະສົມ.*
*7 ດ້ວຍວ່າບໍ່ສູ້ຈະມີໃຜຍອມຕາຍແທນຄົນຊອບທັມແຕ່ບາງທີອາດຈະມີຄົນກ້າຕາຍແທນຄົນດີກໍໄດ້. 8 ແຕ່ຝ່າຍພຣະ-*
*ເຈົ້າຊົງສະແດງຄວາມຮັກຂອງພຣະອົງແກ່ເຮົາທັງຫຼາຍຄືຂນະທີ່ພວກເຮົາຍັງເປັນຄົນຜິດບາບຢູ່ນັ້ນພຣະຄຣິດໄດ້*
*ຄຣິດໄດ້ຊົງຍອມສິ້ນພຣະຊົນແທນເຮົາທັງຫຼາຍ.*

ຂ່າວປະເສີດ. ຄໍາເວົ້ານີ້ມີຄວາມໝາຍວ່າ**ຂ່າວດີເລີດ**, ແລະພວກເຮົາພົບພໍ້ຂ່າວດີທີ່ສຸດທີ່ພວກເຮົາຈະໄດ້ຮັບໃນພຣະຄັມພີ. ໃນຈົດໝາຍຂອງອັຄສາວົກໂປໂລເຖິງຊາວໂຣມັນ, ເພິ່ນໄດ້ໃຫ້ຄໍາອະທິບາຍທີ່ແຈ່ມແຈ້ງທີ່ສຸດຂອງຂ່າວປະເສີດ. ມັນແມ່ນຂ່າວປະເສີດນີ້ເອງທີ່-ໃນກໍລະນີທີ່ພວກເຮົາບໍ່ສາມາດຊ່ອຍຕົນເອງແລະສິ້ນຫວັງໃນຄວາມບາບຂອງພວກເຮົາ-ພຣະເຈົ້າບໍ່ໄດ້ຊົງນັ່ງຢູ່ເສີຍໆ, ຊົງຫວັງວ່າພວກເຮົາຈະໄດ້ປະພຶດຕົວໃນວິທີທີ່ມີປະສິດທິພາບຫຼາຍຂຶ້ນກ່ອນທີ່ພວກເຮົາຈະສາມາດເຂົ້າສູ່ຄວາມສັມພັນກັບພຣະອົງ. ພຣະເຈົ້າອົງຊົງລິເລີ່ມດໍາເນີນການຄັ້ງແລກ.

ແມ່ນຫຍັງເປັນຄັ້ງແລກ? ອົງພຣະເຢຊູຄຣິດ, ພຣະບຸດອົງດຽວຂອງພຣະເຈົ້າ, ໄດ້ຊົງສະເດັດມາໃນໂລກນີ້ແລະຊົງສິ້ນພຣະຊົນເພື່ອຈ່າຍຄ່າຄວາມບາບຂອງພວກເຮົາ. ***ນີ້ຄືຂ່າວປະເສີດ.*** ສາຍສັມພັນຂອງພວກເຮົາກັບພຣະເຈົ້າບໍ່ເຮັດໃຫ້ຖືກຕ້ອງໂດຍການກະທຳທີ່ດີຫຼືຄວາມສາມາດຂອງພວກເຮົາທີ່ຈະເຊື່ອພຣະບັນຍັດສິບປະການທັງໝົດ. ຕາມຄວາມເປັນຈິງແລ້ວ, ພຣະຄັມພີບອກວ່າ <u>ເປັນໄປບໍ່ໄດ້</u>. ພວກເຮົາບໍ່ສາມາດຮັກສາພຣະບັນຍັດ<u>ໝົດທຸກຂໍ້</u>. ເຫດສະນັ້ນ, ພຣະເຈົ້າໄດ້ຊົງສະເດັດມາແລະຊົງກະທຳເພື່ອພວກເຮົາໂດຍພຣະອົງເອງໃນພຣະລັກສນະ<u>ພຣະເຢຊູ</u>. ພຣະອົງຊົງໄດ້ດຳເນີນຊີວິດໂດຍສົມບູນແບບແລະໄດ້ຊົງສິ້ນພຣະຊົນແທນພວກເຮົາເທິງໄມ້ກາງແຂນທີ່ແຂວນທີ່ແຄວວາຣີ, ເພື່ອເປັນການໄຖ່ຄ່າຄວາມບາບສຳລັບພວກເຮົາ.

ແລ້ວຈຶ່ງນຳພວກເຮົາມາສູ່ຄຳຖາມທີ່ວ່າ: **ເປັນຫຍັງ?** ເປັນຫຍັງພຣະເຈົ້າຈຶ່ງຊົງສລະຄວາມສະດວກສະບາຍແລະພຣະຣັສມີໃນສວັນເພື່ອສະເດັດມາໃນໂລກນີ້ພຽງແຕ່ເພື່ອຕາຍແທນພວກເຮົາ? ພຣະຄັມພີບອກໄວ້ຢ່າງແຈ່ມແຈ້ງ: **<u>ພຣະອົງຊົງຮັກມະນຸດ</u>.** ຢ່າງເປັນການໂຕ້ວາທີກັນໄດ້, ຂໍ້ພຣະຄັມພີທີ່ມີຊື່ສຽງທີ່ສຸດໃນພຣະຄັມພີທັງໝົດແມ່ນໂຢຮັນບົດທີ່ 3 ຂໍ້ 16: "*ເພາະວ່າພຣະເຈົ້າຊົງຮັກໂລກຈົນໄດ້ປະທານພຣະບຸດອົງດຽວຂອງພຣະອົງເພື່ອທຸກຄົນທີ່ວາງໃຈເຊື່ອໃນພຣະບຸດນັ້ນຈະບໍ່ຈິບຫາຍແຕ່ມີຊີວິດອັນຕລອດໄປເປັນນິດ.*" **ຄວາມຮັກເປັນກຸນແຈ.**

| ທ່ານໄດ້ຮັບຮູ້ເຖິງຄວາມຈຳເປັນຂອງທ່ານໃນການຮັບຮູ້ອົງພຣະເຢຊູຄຣິດແນວໃດ? |
|---|

ຄຳເວົ້າສຳລັບຄວາມຮັກໃຊ້ໃນພຣະຄັມພີ ໂຣມ 5:8 ຄື *ຄວາມຮັກນີ້ຮັບ ອາກາເປ (agape),* ຊຶ່ງມີແນວຄິດຂອງຄຳໝັ້ນສັນຍາ ຫຼື ຄວາມເສັຽສລະ. ອາກາເປສະແດງຄວາມໝາຍຂອງການກະທຳ. ຄວາມຮັກຂອງພຣະເຈົ້າທີ່ມີຕໍ່ພວກເຮົາແມ່ນຫຼາຍກວ່າຄວາມຮູ້ສຶກ: ມັນແມ່ນຄຳໝັ້ນສັນຍາຕໍ່ພວກເຮົາທີ່ພຣະອົງໄດ້ຊົງນຳໄປສູ່ການປະຕິບັດໂດຍຄວາມຕັ້ງໃຈຕາຍແທນພວກເຮົາ. ແລະພຣະອົງຊົງມອບໃຫ້ແກ່ພວກເຮົາໃນຂນະທີ່ພວກເຮົາ<u>ບໍ່ສົມຄວນຈະໄດ້ຮັບ</u>.
"ຂ່າວປະເສີດ" ນີ້ເອງທີ່ແບ່ງແຍກບັນດາຊາວຄຣິສຕຽນໃຫ້ແຕກຕ່າງຈາກທຸກໆຣະບົບຄວາມເຊື່ອອື່ນໆ:
**ຄວາມເຊື່ອອື່ນ:** ຖ້າທ່ານເປັນຄົນດີ, ພຣະເຈົ້າຈະຮັກທ່ານ. ຖ້າທ່ານປະພຶດປະຕິບັດດີ ພຣະເຈົ້າຈະຮັບເອົາທ່ານ.
**ຊາວຄຣິສຕຽນ**: ທ່ານເປັນຄົນຊົ່ວແຕ່ພຣະເຈົ້າກໍ່ຍັງຊົງຮັກທ່ານ, ຈົນເຖິງຈຸດທີ່ຕາຍແທນທ່ານ. ທ່ານຊ່ອຍຫຍັງບໍ່ໄດ້ໃນຄວາມບາບຂອງຕົນ ແຕ່ພຣະເຈົ້າຊົງຊ່ອຍເຫຼືອທ່ານແລະຍອມຮັບເອົາທ່ານເຖິງຈະເປັນຢ່າງໃດກໍ່ຕາມ.
ຈຸດສຳຄັນຂອງຂ່າວປະເສີດແມ່ນ <u>ຄຳໝັ້ນສັນຍາ</u>. ແມ່ນແລ້ວ, ພວກເຮົາຖືກຮຽກເອີ້ນໃຫ້ເຮັດຄຳໝັ້ນສັນຍາຕໍ່ພຣະເຈົ້າ, ແຕ່ຄຳໝັ້ນສັນຍານັ້ນຕ້ອງເຂົ້າໃຈໃນແງ່ຂອງຄວາມເປັນຈິງນີ້: *ພຣະເຈົ້າຊົງໃຫ້ຄຳໝັ້ນສັນຍາກ່ອນ.* ແລະຄຳໝັ້ນສັນຍາຂອງພຣະອົງນັ້ນແມ່ນ: "*ຮວມໝົດທຸກຢ່າງ, ຕລອດກາລ, ບໍ່ວ່າຈະເປັນແນວໃດ (ປາສຈາກເງື່ອນໄຂ)*".

## 2. <u>ໂຣມ5:9-11</u>

*9 ເຫດສັນນັ້ນເມື່ອພວກເຮົາໄດ້ຊົງຖືວ່າເປັນຄົນຊອບທັມແລ້ວດ້ວຍພຣະໂລຫິດຂອງພຣະອົງຫຼາຍກວ່ານັ້ນອີກເຮົາທັງຫຼາຍຈະພົ້ນຈາກພຣະພິໂຣດຂອງພຣະເຈົ້າໂດຍພຣະອົງ 10 ດ້ວຍວ່າຖ້າເມື່ອເຮົາທັງຫລາຍຍັງເປັນສັດຕູຕໍ່ພຣະເຈົ້າ-ພຣະເຈົ້າໄດ້ຊົງໂຜດໃຫ້ພວກເຮົາໄດ້ກັບຄືນດີກັບພຣະອົງໂດຍທີ່ພຣະບຸດຂອງພຣະອົງຊົງສິ້ນພຣະຊົນແລ້ວຫຼາຍກວ່ານັ້ນອີກ,ເມື່ອເຮົາທັງຫລາຍໄດ້ກັບຄືນດີແລ້ວພວກເຮົາກໍຈະໄດ້ພົ້ນດ້ວຍການຊົງຄືນພຣະຊົນຂອງພຣະອົງ. 11 ບໍ່ພຽງແຕ່ເທົ່ານັ້ນ, ເຮົາທັງຫຼາຍຍັງຊົມຊື່ນຍິນດີໃນພຣະເຈົ້າໂດຍທາງພຣະເຢຊູຄຣິດເຈົ້າຂອງພວກເຮົາຜູ້ຊົງເປັນເຫດໃຫ້ເຮົາທັງຫຼາຍໄດ້ກັບຄືນດີກັບພຣະເຈົ້າ.*

ຂ່າວດີຂອງຂ່າວປະເສີດນັ້ນກໍ່ຄື ໃນຂນະທີ່ພວກເຮົາຊ່ອຍຫຍັງບໍ່ໄດ້ໃນຄວາມບາບຂອງພວກເຮົາ, ພຣະເຢຊູໄດ້ຊົງສະເດັດມາໃນໂລກນີ້ ແລະຊົງສິ້ນພຣະຊົນເພື່ອພວກເຮົາ. ອັຄສາວົກໂປໂລເນັ້ນໜັກ 3 ສິ່ງທີ່ເກີດແກ່ພວກເຮົາ

ດ້ວຍວ່າການສິ້ນພຣະຊົນຂອງອົງພຣະຄຣິດແທນພວກເຮົາ ຄືດັ່ງນີ້:

1. **ຖືກປະກາດວ່າຊອບທັມໂດຍພຣະໂລຫິດຂອງພຣະເຢຊູ.** ຄຳວ່າ ຊອບທັມ ມີຄວາມໝາຍ "ຢືນຢູ່ຢ່າງຖືກຕ້ອງ" ຫຼື "ປະພຶດຢ່າງຖືກຕ້ອງ". ເພື່ອເຂົ້າໃຈຄວາມງົດງາມຂອງສິ່ງນີ້, ພວກເຮົາຕ້ອງເຂົ້າໃຈທັມມະຊາດຂອງຄວາມບາບກ່ອນ. ພຣະເຈົ້າຊົງບໍຣິສຸດໂດຍສົມບູນແບບ. ດ້ວຍເຫດນີ້, ພຣະອົງບໍ່ຊົງສະຖິດຢູ່ສະຖານທີ່ໆມີບາບ. ຂ່າວຮ້າຍກໍຄື: "*ດ້ວຍວ່າທຸກຄົນໄດ້ເຮັດຜິດບາບແລະຂາດຈາກພຣະຣັສມີຂອງພຣະເຈົ້າ.*" (ໂຣມ 3:23). ເຫດສະນັ້ນ, ຄວາມຫວັງດຽວທີ່ພວກເຮົາຈະເຂົ້າໄປສູ່ສະຖານທີ່ໆພຣະອົງຊົງສະຖິດຢູ່ແມ່ນການໄດ້ຖືກເຮັດໃຫ້ຊອບທັມໃນອົງພຣະຄຣິດ.

2. **ຖືກລອດພົ້ນຈາກພຣະພິໂຣດຂອງພຣະເຈົ້າ.** ໃນເມື່ອພຣະໂລຫິດຂອງພຣະເຢຊູເຮັດໃຫ້ພວກເຮົາຊອບທັມ, ພວກເຮົາໄດ້ພົ້ນຈາກພຣະພິໂຣດຂອງພຣະເຈົ້າ. ພຣະເຈົ້າຊົງກຽດຊັງຄວາມບາບ, ແລະດວ້ຍເຫດວ່າພຣະອົງຊົງເປັນຄວາມຊອບທັມແລະເປັນພຣະເຈົ້າອົງທ່ຽງແທ້, ພຣະອົງຊົງຕ້ອງລົງໂທດຄວາມບາບ. ດ້ວຍພຣະໂລຫິດຂອງອົງພຣະຄຣິດ,ພວກເຮົາຈຶ່ງບໍ່ຕ້ອງມີປະສົບການກ່ຽວກັບພຣະພິໂຣດ, ມີແຕ່ຄວາມຮັກແລະການຊົງຮັບເອົາເທົ່ານັ້ນ.

3. **ໄດ້ຄືນດີກັບພຣະເຈົ້າໂດຍຜ່ານການສິ້ນພຣະຊົນຂອງພຣະເຢຊູ.** ບໍ່ພຽງແຕ່ວ່າພວກເຮົາໄດ້ຊົງຖືກເຮັດໃຫ້ເປັນຄົນຊອບທັມໃນສາຍພຣະເນດຂອງພຣະເຈົ້າ ແລະພົ້ນຈາກພຣະພິໂຣດເທົ່ານັ້ນ, ແຕ່ພວກເຮົາຍັງໄດ້ຖືກເຮັດໃຫ້ຄືນດີກັບພຣະເຈົ້າໂດຍການສິ້ນພຣະຊົນຂອງອົງພຣະຄຣິດ. ໃນໝາກຫົວໃຈຂອງຂ່າວປະເສີດ, ພວກເຮົາເຫັນພຣະເຈົ້າຊົງສແວງຫາພວກເຮົາເພື່ອໃຫ້ຄືນດີກັບພຣະອົງ. ຄວາມຊົມຊື່ນຍິນດີແລະຄວາມພໍໃຈທີ່ຍິ່ງໃຫຍ່ທີ່ສຸດແມ່ນ<u>ຄວາມ*ສັມພັນສ່ວນຕົວກັບພຣະອົງຜູ້ໄດ້ຊົງສ້າງພວກເຮົາຂຶ້ນມາ*</u>. ແຕ່ຄວາມບາບກີດກັ້ນພວກເຮົາຈາກປະສົບການນັ້ນເພາະຄວາມບາບຂອງພວກເຮົາໄດ້ຕັດສາຍສັມພັນຂອງພວກເຮົາຈາກພຣະເຈົ້າ. ການສິ້ນພຣະຊົນຂອງອົງພຣະຄຣິດເຮັດໃຫ້ພວກເຮົາກັບມາຄືນດີໃນຄວາມສັມພັນກັບພຣະອົງ. ຄຳໝັ້ນສັນຍາຂອງອົງພຣະຄຣິດທີ່ມີຕໍ່ພວກເຮົາບໍ່ພຽງແຕ່ເຮັດໃຫ້ພວກເຮົາເປັນຄົນທີ່ດີກວ່າເທົ່ານັ້ນ; <u>ພຣະອົງຊົງນຳພວກເຮົາກັບມາສູ່ຜູ້ທີ່ພຣະອົງໄດ້ຊົງສ້າງໃຫ້ເປັນຕາມນ້ຳພຣະທັຍ.</u>

| |
|---|
| *ແມ່ນຫຍັງທີ່ເຮັດໃຫ້ທ່ານມີຄວາມປິ້ມປິຕິຍິນດີໃນຕອນນີ້ທີ່ທ່ານໄດ້ຮູ້ຈັກພຣະຄຣິດ?* |

## 3. <u>ໂຣມ 5:12, 18-21</u>

*12 ເຫດສັນນັ້ນຄວາມຜິດບາບໄດ້ເຂົ້າມາໃນໂລກເພາະດ້ວຍມະນຸດຄົນດຽວແລະຄວາມຕາຍກໍໄດ້ເກີດມາຍ້ອນຄວາມ*
*ຜິດບາບນັ້ນ. ຢ່າງນັ້ນແຫຼະ, ຄວາມຕາຍຈຶ່ງໄດ້ລາມໄປເຖິງມະນຸດທຸກຄົນເພາະວ່າທຸກຄົນໄດ້ເຮັດບາບນັ້ນ. 18 ເຫດ*
*ດັ່ງນີ້ການຊົງພິພາກສາລົງໂທດໄດ້ມາເຖິງຄົນທັງປວງເພາະການລະເມີດເທື່ອດຽວສັນໃດການຊົງກະທຳອັນຊອບທັມ*
*ເທື່ອດຽວກໍນຳການປົດປ່ອຍແລະຊີວິດມາເຖິງຄົນທັງປວງສັນນັ້ນ. 19 ດ້ວຍວ່າຄົນຈຳນວນຫຼາຍຕົກເປັນຄົນຜິດບາບ*
*ເພາະມະນຸດຄົນດຽວທີ່ບໍ່ເຊື່ອຟັງສັນໃດຄົນຈຳນວນຫຼາຍກໍຈະໄດ້ຊົງຖືວ່າເປັນຄົນຊອບທັມເພາະພຣະອົງຜູ້ດຽວທີ່ໄດ້*
*ເຊື່ອຟັງສັນນັ້ນ. 20 ພຣະບັນຍັດໄດ້ມີຂຶ້ນກໍເພື່ອຄວາມຜິດຈະໄດ້ປາກົດຫຼາຍຂຶ້ນແຕ່ທີ່ໃດມີຄວາມຜິດບາບປາກົດຫຼາຍ*
*ຂຶ້ນພຣະກະຣຸນາທິຄຸນກໍຈະມີຫຼາຍລົ້ນຂຶ້ນໃນທີ່ນັ້ນ. 21 ເພື່ອວ່າຄວາມຜິດບາບໄດ້ຄອບງຳໃຫ້ເຖິງຄວາມຕາຍສັນໃດ*
*ພຣະກະຣຸນາທິຄຸນກໍຈະໄດ້ຄອບງຳດ້ວຍຄວາມຊອບທັມໃຫ້ເຖິງຊີວິດອັນຕລອດໄປເປັນນິດໂດຍທາງພຣະເຢຊູຄຣິດ*
*ອົງພຣະຜູ້ເປັນເຈົ້າຂອງເຮົາທັງຫຼາຍສັນນັ້ນ.*

| |
|---|
| ແມ່ນຫຍັງທີ່ພວກເຮົາສາມາດຮຽນຮູ້ກ່ຽວກັບຜົນສະທ້ອນຂອງຄວາມບາບຈາກພຣະຄັມພີຕອນນີ້? |

ຄຳໝັ້ນສັນຍາຂອງອົງພຣະຄຣິດທີ່ໃຫ້ແກ່ພວກເຮົາບໍ່ໄດ້ອະວະສານສຸດສິ້ນຢູ່ທີ່ພຣະອົງໄດ້ຊົງເຮັດໃຫ້ພວກເຮົາເປັນຄົນຊອບທັມໃນສາຍພຣະເນດຂອງອົງພຣະເຈົ້າ. ການສິ້ນພຣະຊົນຂອງອົງພຣະຄຣິດເໝືອນກັນ ມີຄວາມໝາຍວ່າ

ພວກເຮົາຈະໄດ້ໄປຢູ່ກັບພຣະເຈົ້າໃນເມື່ອພວກເຮົາຕາຍຈາກໂລກນີ້. ໂດຍຄຳໝັ້ນສັນຍາຂອງອົງພຣະຄຣິດໃຫ້ແກ່ພວກເຮົາ, ເມື່ອພວກເຮົາຫາຍໃຈຄັ້ງສຸດທ້າຍ ຈິດວິນຍານຂອງພວກເຮົາຈະໄດ້ຖືກນຳພາເຂົ້າສູ່ທີ່ພຣະເຈົ້າແລະພຣະຜູ້ໄຖ່ຊົງປາກົດໃນທັນທີທັນໃດຊຶ່ງເປັນສະຖານທີ່ໆພວກເຮົາຈະມີຊີວິດຢູ່ກັບພຣະອົງຕລອດໄປເປັນນິດ ໃນສັນຕິພາບທີ່ສົມບູນແບບແລະປາສຈາກຄວາມບາບ. ເປັນຫຍັງສິ່ງນັ້ນຈຶ່ງເປັນຂ່າວດີທີ່ສຸດ? ດັ່ງທີ່ພວກເຮົາໄດ້ເຫັນໃນຂໍ້ 12, ມະນຸດຊາດທັງໝົດໄດ້ຮັບມູນມໍຣະດົກຈາກທັມມະຊາດບາບຂອງອາດາມ. ນີ້ໝາຍຄວາມວ່າພວກເຮົາທັງໝົດມຸ້ງໜ້າສູ່ນະຮົກ *ຖ້າພວກເຮົາບໍ່ໄດ້ຮັບຂອງຂວັນອັນໜ້າອັສຈັນແຫ່ງພຣະຄຸນຂອງພຣະເຈົ້າ.* ພຣະເຈົ້າບໍ່ຊົງພຽງແຕ່ໄຖ່ບາບພວກເຮົາເທົ່ານັ້ນ, ແຕ່ພຣະອົງຊົງມີພຣະປະສົງຈະຢູ່ກັບພວກເຮົາຊົ່ວນິຣັນ. **<u>ນີ້ເປັນພຣະສັນຍາທີ່ລ້ຳເລີດອັສຈັນ!</u>**
ແຕ່ຍັງມີຄຳຖາມນຶ່ງເຫຼືອຢູ່: ທ່ານໄດ້ຮັບຄວາມຊອບທັມສະແດງຜົນ, ປາສຈາກພຣະພິໂຣດ, ການຄືນດີ, ຄວາມຮັກທີ່ໃຫ້ຊີວິດນິຣັນດອນຂອງພຣະເຈົ້າບໍ່? ບາດກ້າວການປະຕິບັດຂອງທ່ານໃນການໄດ້ຮັບຂອງຂວັນອັນໜ້າອັສຈັນແຫ່ງພຣະຄຸນຂອງພຣະເຈົ້ານັ້ນແມ່ນແຕ່ພຽງຄວາມເຊື່ອຖືໃນພຣະເຈົ້າເທົ່ານັ້ນ!
**<u>ມັນມີຊື່ວ່າ "ຄວາມເຊື່ອ"</u>.** ຈົ່ງອະທິຖານຕໍ່ ພຣະເຈົ້າດຽວນີ້ ແລະຍອມສາຣະພາບວ່າທ່ານເປັນຄົນບາບຊຶ່ງຕ້ອງການການອະພັຍໂທດຈາກພຣະອົງ ແລະມີ ຄວາມປາຖນາຢາກຮັບເອົາການອະພັຍໂທດນັ້ນ ໂດຍຜ່ານການຊົງເສັຽສລະທີ່ອົງພຣະເຢຊູຊົງໃດ້ຈ່າຍໃຫ້ເທິງໄມ້ກາງແຂນໂດຍການຫຼັ່ງພຣະໂລຫິດຂອງພຣະອົງ. ພຣະເຈົ້າຊົງຮັກທ່ານເກີນກວ່າຈິນຕະນາການ (ຄວາມນຶກຄິດ) ຂອງທ່ານແລະພຣະອົງຊົງມີຄຳໝັ້ນສັນຍາຢ່າງເຕັມປ່ຽມ ທີ່ຈະນຳຄວາມຮັກນັ້ນມາສູ່ທ່ານ.

| ມີວິທີທາງໃດແດ່ທີ່ທ່ານໄດ້ເຫັນພຣະຄຸນທະວີຄູນເພີ້ມຂຶ້ນໃນກຸ່ມຂອງພວກເຮົາ? |
|---|

## <u>ນຳໃຊ້ໃນຊີວິດ</u>

ທ່ານຈະໂຕ້ຕອບຕໍ່ຄຳໝັ້ນສັນຍາຂອງອົງພຣະຄຣິດຢ່າງໃດ? ຈົ່ງເລືອກເອົານຶ່ງໃນການນຳໃຊ້ຕໍ່ລົງໄປນີ້:

➢ **ຈົ່ງໄຫວ້ວອນອະທິຖານ.** ຖ້າຫາກທ່ານຍັງບໍ່ເຄີຍຮັບເອົາອົງພຣະຄຣິດໃຫ້ເປັນອົງພຣະເຈົ້າແລະພຣະຜູ້ຊົງໄຖ່ໃຫ້ລອດພົ້ນ, ຈົ່ງຮັບເອົາດຽວນີ້. ຈົ່ງຊອກຫາໃຜຜູ້ນຶ່ງທີ່ທ່ານຮູ້ຈັກທີ່ເປັນຄຣິສຕຽນທີ່ມຸ່ງໝັ້ນ ແລ້ວຖາມລາວກ່ຽວກັບບາດກ້າວໃນຄວາມເຊື່ອໃນອົງພຣະຄຣິດ ເພື່ອໃຫ້ເປັນອົງພຣະເຈົ້າ ແລະພຣະຜູ້ຊົງໄຖ່ໃຫ້ລອດພົ້ນ.

➢ **ຈົ່ງຈົດບັນຊີ.** ຈົ່ງອະທິຖານແລະສະທ້ອນເຖິງພຣະສັນຍາຂອງອົງພຣະຄຣິດທີ່ມີຕໍ່ທ່ານ. ຈົ່ງຖາມຕົນເອງວ່າ: "ຂ້ອຍພວມດຳເນີນຊີວິດຢ່າງໃດຕາມຄຳໝັ້ນສັນຍາອັນຍິ່ງໃຫຍ່ຂອງອົງພຣະເຢຊູທີ່ມີຕໍ່ຂ້ອຍ?"

➢ **ຈົ່ງແບ່ງປັນ.** ໃນອາທິດນີ້ຈົ່ງແບ່ງປັນຄວາມຮັກແລະຄຳໝັ້ນສັນຍາຂອງອົງພຣະຄຣິດກັບໃຜຜູ້ນຶ່ງຊຶ່ງບໍ່ເຄີຍໄດ້ຍິນສິ່ງນີ້ມາກ່ອນ. ຈົ່ງອະທິຖານຕໍ່ອົງພຣະເຈົ້າຂໍພຣະອົງຊົງນຳມາສູ່ຈິດໃຈຂອງທ່ານໃຜຜູ້ນຶ່ງຊຶ່ງຕ້ອງການທີ່ຈະໄດ້ຍິນຂ່າວປະເສີດແລ້ວເຮັດໃຫ້ເປັນຄວາມສຳຄັນລະດັບນຶ່ງໃນການແບ່ງປັນຂ່າວປະເສີດນັ້ນແກ່ລາວ.

ມີຫຼາຍຄົນຖາມຫາຄຳໝັ້ນສັນຍາຂອງພວກເຮົາ, ແລະມີຫຼາຍເຫດຜົນທີ່ພວກເຮົາສາມາດອ້າງອີງທີ່ບໍ່ມີຄວາມປາຖນາຈະບອກໃຫ້ຮູ້. ແຕ່ພຣະເຈົ້າຊົງໃຫ້ຄຳໝັ້ນສັນຍາແກ່ພວກເຮົາແລະຊົງລໍຄອຍຄຳຕອບທີ່ພວກເຮົາຈະບໍ່ກົບແໜງໃຈຈັກເທື່ອທີ່ຈະໃຫ້ຢ່າງແນ່ນອນ.

**ອຸປຖັມໂດຍລາວຊາວເທີນບັບຕິສສັມພັນ**[http://lsbf.us/](http://lsbf.us/) **ໂດຍSSK**